**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------=====000=====-------------

ແຂວງ ອຸດົມໄຊ

ເຈົ້າແຂວງ

ເລກທີ..472... /ຈຂ.ອຊ

ອຸດົມໄຊ, ວັນທີ..16../..6../2016

## ຄຳສັ່ງ

## ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານນາຍົກລັດຖະມົນຕີ

## ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ພາຍໃນແຂວງອຸດົມໄຊ

**ເຖິງ** : ຫົວໜ້າພະແນກການ, ອົງການທຽບເທົ່າ, ສອງກອງບັນຊາການ ປກຊ-ປກສ, ຫ້ອງການ, ເຈົ້າເມືອງ 7 ເມືອງ ແລະ ອົງການປົກຄອງບ້ານ ທຸກໆ ບ້ານໃນທົ່ວແຂວງ.

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ 15/ນຍ, ລົງວັນທີ 13/05/ 2016.

ໃນໄລຍະຜ່ານມາ ແຂວງໄດ້ອອກນິຕິກຳຫຼາຍສະບັບກ່ຽວກັບການຕ້ານ ແລະ ສະກັດກັ້ນການຂຸດຄົ້ນໄມ້ເຊັ່ນ: ແຈ້ງການຂອງຫ້ອງວ່າການປົກຄອງແຂວງສະບັບເລກທີ 761/ຫປຂ, ລົງວັນທີ 19/4/2011; ຄຳສັ່ງແນະນຳຂອງທ່ານເຈົ້າແຂວງ 3 ສະບັບຄື: ສະບັບເລກທີ 934/ຈຂ.ອຊ, ລົງວັນທີ 17/6/2011; ສະບັບເລກທີ 472/ຈຂ.ອຊ, ລົງວັນທີ 24/2/2012; ສະບັບເລກທີ 906/ຈຂ.ອຊ, ລົງວັນທີ 22/6/2012 ແລະ ແຈ້ງການຂອງຫ້ອງວ່າການປົກຄອງແຂວງສະບັບເລກທີ 1076/ຫປຂ, ລົງວັນທີ 1/8/2012. ແຕ່ກໍ່ຍັງເຫັນວ່າມີການລັກລອບຂຸດຄົ້ນໄມ້ແບບຊະຊາຍຢູ່ບາງເຂດຂອງເມືອງໃນທົ່ວແຂວງ ແລະ ຍັງມີການອະນຸມັດການຂຸດຄົ້ນໄມ້ໃຫ້ແກ່ຜູ້ປະກອບການ, ປະຊາຊົນ, ຄອບຄົວຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ພະນັກງານບຳນານ ແລະ ອື່ນໆ ເຊິ່ງເປັນການຂັດກັບຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີສະບັບເລກທີ 32/ນຍ, ລົງວັນທີ 06/03/2012 (ຂໍ້ 7.7.2). ແລະ ເພື່ອຈັດຕັ້ງປະຕິບັດສັ່ງຂອງທ່ານນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ 15/ນຍ, ລົງວັນທີ 13/05/ 2016 ໃຫ້ມີຄວາມສັກສິດ ແລະ ເຂັ້ມງວດ.

**ເຈົ້າແຂວງ-ແຂວງອຸດົມໄຊອອກຄຳສັ່ງດັ່ງນີ້:**

1. ໃຫ້ບັນດາຫົວໜ້າພະແນກການເຊັ່ນ: ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກອຸດສາຫະກຳແລະການຄ້າແຂວງ, ພະແນກກວດກາລັດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------=====000=====-------------

ແຂວງ ອຸດົມໄຊ

ເຈົ້າແຂວງ

ເລກທີ..472... /ຈຂ.ອຊ

ອຸດົມໄຊ, ວັນທີ..16../..6../2016

**ຄຳສັ່ງ**

**ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານນາຍົກລັດຖະມົນຕີ**

**ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ພາຍໃນແຂວງອຸດົມໄຊ**

**ເຖິງ :** ຫົວໜ້າພະແນກການ, ອົງການທຽບເທົ່າ, ສອງກອງບັນຊາການ ປກຊ-ປກສ, ຫ້ອງການ, ເຈົ້າເມືອງ 7 ເມືອງ ແລະ ອົງການປົກຄອງບ້ານ ທຸກໆ ບ້ານໃນທົ່ວແຂວງ.

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ 15/ນຍ, ລົງວັນທີ 13/05/ 2016.

ໃນໄລຍະຜ່ານມາ ແຂວງໄດ້ອອກນິຕິກຳຫຼາຍສະບັບກ່ຽວກັບການຕ້ານ ແລະ ສະກັດກັ້ນການຂຸດຄົ້ນໄມ້ເຊັ່ນ: ແຈ້ງການຂອງຫ້ອງວ່າການປົກຄອງແຂວງສະບັບເລກທີ 761/ຫປຂ, ລົງວັນທີ 19/4/2011; ຄຳສັ່ງແນະນຳຂອງທ່ານເຈົ້າແຂວງ 3 ສະບັບຄື: ສະບັບເລກທີ 934/ຈຂ.ອຊ, ລົງວັນທີ 17/6/2011; ສະບັບເລກທີ 472/ຈຂ.ອຊ, ລົງວັນທີ 24/2/2012; ສະບັບເລກທີ 906/ຈຂ.ອຊ, ລົງວັນທີ 22/6/2012 ແລະ ແຈ້ງການຂອງຫ້ອງວ່າການປົກຄອງແຂວງສະບັບເລກທີ 1076/ຫປຂ, ລົງວັນທີ 1/8/2012. ແຕ່ກໍ່ຍັງເຫັນວ່າມີການລັກລອບຂຸດຄົ້ນໄມ້ແບບຊະຊາຍຢູ່ບາງເຂດຂອງເມືອງໃນທົ່ວແຂວງ ແລະ ຍັງມີການອະນຸມັດການຂຸດຄົ້ນໄມ້ໃຫ້ແກ່ຜູ້ປະກອບການ, ປະຊາຊົນ, ຄອບຄົວຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ພະນັກງານບໍານານ ແລະ ອື່ນໆ ເຊິ່ງເປັນການຂັດກັບຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີສະບັບເລກທີ 32/ນຍ, ລົງວັນທີ 06/03/2012 (ຂໍ້ 7.7.2). ແລະ ເພື່ອຈັດຕັ້ງປະຕິບັດສັ່ງຂອງທ່ານນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ 15/ນຍ, ລົງວັນທີ 13/05/ 2016 ໃຫ້ມີຄວາມສັກສິດ ແລະ ເຂັ້ມງວດ.

**ເຈົ້າແຂວງ-ແຂວງອຸດົມໄຊອອກຄຳສັ່ງດັ່ງນີ້:**

1. ໃຫ້ບັນດາຫົວໜ້າພະແນກການເຊັ່ນ: ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກອຸດສາຫະກຳແລະການຄ້າແຂວງ, ພະແນກກວດກາລັດ

ຂອງແຂວງ, ພາສີ, ສອງກອງບັນຊາການ ກປຊ-ກປສ, ເຈົ້າເມືອງ 7 ເມືອງ ແລະ ອົງການປົກຄອງບ້ານທັງໝົດທຸກໆ ບ້ານໃນທົ່ວແຂວງຕ້ອງເພີ່ມທະວີຄວາມເອົາໃຈໃສ່ ແລະ ຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້, ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.

2. ໃຫ້ຢຸດຕິການສົ່ງອອກໄມ້ທ່ອນ, ໄມ້ຕີຕັບ, ໄມ້ແປຮູບ, ໄມ້ຊອຍ, ຮາກໄມ້ ຫຼື ເຫງົ້າໄມ້, ຕໍໄມ້, ປູດໄມ້, ງ່າໄມ້ ແລະ ໄມ້ຢືນຕົ້ນ ຫຼື ໄມ້ປະດັບ ທີ່ຂຸດຄົ້ນອອກຈາກປ່າທຳມະຊາດ ໄປຕ່າງປະເທດ ໃນທຸກກໍລະນີຢ່າງເດັດຂາດລວມທັງໄມ້ທີ່ແຂວງ, ເມືອງ, ບ້ານໄດ້ອະນຸມັດຜ່ານມາແຕ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ; ໃຫ້ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ຕາມມາດຕະຖານທີ່ກະຊວງອຸດສາຫະກຳ ແລະ ການຄ້າວາງອອກ (ຕາມຂໍ້ຕົກລົງສະບັບເລກທີ 2005/ອຄ.ກອຫ, ລົງວັນທີ 28/9/2015) ແລ້ວຈຶ່ງອະນຸຍາດໃຫ້ສົ່ງອອກ.

3. ຫ້າມນຳໄມ້ ແລະ ເຄື່ອງປ່າຂອງດົງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຈາກຕ່າງປະເທດມາຜ່ານ ເພື່ອສົ່ງໄປປະເທດທີສາມ.

4. ໃຫ້ສືບຕໍ່ປະຕິບັດຕາມຄຳສັ່ງຂອງທ່ານນາຍົກລັດຖະມົນຕີສະບັບເລກທີ 31/ນຍ, ລົງວັນທີ 5 ພະຈິກ 2013 ວ່າດ້ວຍການຢຸດຕິຊົ່ວຄາວ ການຂຸດຄົ້ນໄມ້ຈາກເຂດປ່າຜະລິດ ແລະ ໃຫ້ສືບຕໍ່ສ້າງແຜນຈັດສັນປ່າຜະລິດໃຫ້ສຳເລັດ ແລ້ວລາຍງານໃຫ້ແຂວງຮັບຊາບ ແລະ ພິຈາລະນາຮັບຮອງ.

   4.1 ສຳລັບການຂຸດຄົ້ນໄມ້ອອກຈາກເຂດກໍ່ສ້າງພື້ນຖານໂຄງລ່າງເຊັ່ນ: ແລວບຸກເບີກກໍ່ສ້າງເສັ້ນທາງໃໝ່, ເຂດກໍ່ສ້າງເຂື່ອນໄຟຟ້າ, ກໍ່ສ້າງແລວສາຍສົ່ງທຸກປະເພດ, ເຂດທີ່ນໍ້າຈະຖ້ວມ, ເຂດຂຸດຄົ້ນແຮ່ທາດ ແລະ ອື່ນໆ ແມ່ນໃຫ້ມີການສຳຫຼວດ, ຂຶ້ນບັນຊີຈຳນວນ ແລະ ບໍລິມາດໄມ້ ໃຫ້ລະອຽດແລ້ວຈຶ່ງນຳສະເໜີແຂວງ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາເພື່ອສັງລວມເຂົ້າແຜນຂຸດຄົ້ນໄມ້ປະຈຳປີແລ້ວສະເໜີສະພາແຫ່ງຊາດພິຈາລະນາຮັບຮອງຕາມຄວາມເໝາະສົມ.

   4.2 ກໍລະນີທີ່ໄດ້ຮັບອະນຸຍາດໃຫ້ຂຸດຄົ້ນແມ່ນຕ້ອງໄດ້ມີການຄຸ້ມຄອງ, ກວດກາການຕັດໄມ້ຢ່າງເຂັ້ມງວດຕາມຈຳນວນ, ບໍລິມາດໄມ້(ບັນຊີໄມ້) ແລະ ຂອບເຂດທີ່ໄດ້ຮັບອະນຸຍາດ. ຖ້າຫາກມີການຕັດເກີນຈຳນວນ ຫຼື ຕັດຢູ່ນອກເຂດທີ່ໄດ້ຮັບອະນຸຍາດ ແມ່ນໃຫ້ດຳເນີນການຢຶດ, ປັບໃໝພ້ອມທັງດຳເນີນຄະດີຕາມກົດໝາຍຕໍ່ຜູ້ທີ່ລະເມີດ.

   4.3 ຫ້າມອະນຸຍາດໃຫ້ຜູ້ພັດທະນາໂຄງການ ຫຼື ຫົວໜ່ວຍຮັບເໝົາກໍ່ສ້າງພື້ນຖານໂຄງລ່າງຕ່າງໆ ເປັນຜູ້ດຳເນີນການຂຸດຄົ້ນໄມ້; ລັດເປັນຜູ້ຮັບຜິດຊອບໂດຍກົງໃນການຂຸດຄົ້ນ ແລະ ຂາຍໄມ້. ຫ້າມບໍ່ໃຫ້ເອົາໄມ້ຊຳລະຄ່າໂຄງການພັດທະນາພື້ນຖານໂຄງລ່າງໂດຍກົງ ຫຼື ການເອົາໄມ້ຕູບໂຄງການ.

5. ໃນເຂດພັດທະນາກໍ່ສ້າງພື້ນຖານໂຄງລ່າງ, ເຂດຂຸດຄົ້ນແຮ່ທາດ ແລະ ເນື້ອທີ່ທຳການຜະລິດຕ່າງໆ ທີ່ລັດຖະບານຍັງບໍ່ທັນໄດ້ອະນຸມັດ ແມ່ນຫ້າມບໍ່ໃຫ້ດຳເນີນການສຳຫຼວດ ແລະ ຂຸດຄົ້ນໄມ້ຢ່າງເດັດຂາດ.

6. ໃຫ້ຢຸດຕິການສະເໜີ ແລະ ອະນຸຍາດເກັບກູ້, ທ້ອນໂຮມໄມ້ກິ່ງງ່າ, ໄມ້ທ່ອນສັ້ນ-ທ່ອນຍາວ, ໄມ້ນອນຂອນຕາຍ ແລະ ບໍ່ອະນຸຍາດໃຫ້ເອົາໄມ້ ແກ້ໄຂນະໂຍບາຍໃຫ້ແກ່ບຸກຄົນໃດໜຶ່ງ.

7. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນລະອຽດ: ຈຳນວນ, ບໍລິມາດໄມ້ ແລະ ພັນທະໄມ້ຄ້າງຢູ່ສະໜາມ 1-2 ທີ່ໄດ້ຮັບອະນຸຍາດໃຫ້ຂຸດຄົ້ນຈາກແຂວງ, ເມືອງ, ບ້ານໃນໄລຍະຜ່ານມາ ເພື່ອລາຍງານເຈົ້າແຂວງ, ຄະນະປະຈຳພັກແຂວງ ພິຈາ

ລະນາໃນການຈັດຕັ້ງປະຕິບັດ. ຖ້າຕົກລົງໃຫ້ຂາຍແມ່ນມອບໃຫ້ຂະແໜງການທີ່ກ່ຽວຂ້ອງປະມູນຂາຍໃຫ້ແກ່ສະມາຄົມອຸດສາຫະກໍາປຸງແຕ່ງໄມ້ຂອງແຂວງ ແລະ ສະມາຄົມເຟີນີເຈີ ຫຼື ຜູ້ປະກອບການອື່ນໆເພື່ອນໍາມາປຸງແຕ່ງເປັນຜະລິດຕະພັນສໍາເລັດຮູບເພື່ອຂາຍຢູ່ພາຍໃນ ຫຼື ສົ່ງອອກ.

7.1 ສໍາລັບໄມ້ທີ່ຂຸດຄົ້ນເກີນແຜນການທີ່ໄດ້ອະນຸມັດຜ່ານມາ ແມ່ນໃຫ້ຢຶດເປັນຂອງລັດ ແລ້ວດໍາເນີນຄະດີຕໍ່ຜູ້ກະທໍາຜິດ ຢ່າງເຂັ້ມງວດ.

7.2 ສ່ວນໄມ້ທີ່ຂຸດຄົ້ນໂດຍບໍ່ໄດ້ຮັບອະນຸຍາດ, ຜິດຕໍ່ລະບຽບກົດໝາຍ ແລະ ຍັງຄ້າງຢູ່ສະໜາມ 1 ແມ່ນບໍ່ໃຫ້ເກັບກູ້ ຫຼື ທ້ອນໂຮມອີກ ເພາະຈະເປັນຊ່ອງຫວ່າງໃຫ້ແກ່ການລັກລອບຕັດໄມ້ຕໍ່ໄປ.

8. ການຂຸດຄົ້ນໄມ້ເພື່ອເປັນແຫຼ່ງພະລັງງານ ( ເຊັ່ນ: ໄມ້ຟືນ, ໄມ້ເຮັດຖ່ານ ), ໄມ້ຫູ້ກຮົ້ວ, ໄມ້ຄ້ໍາແບບ ແມ່ນອະນຸຍາດໃຫ້ເອົາສະເພາະຈາກເນື້ອທີ່ຄຸ້ມຄອງຂອງປະຊາຊົນ ແລະ ປ່າຊົມໃຊ້ຂອງບ້ານ ທີ່ໄດ້ຜ່ານການມອບດິນ - ມອບປ່າ ຫຼື ເອົາຈາກເຂດກໍ່ສ້າງພື້ນຖານໂຄງລ່າງທີ່ໄດ້ຮັບອະນຸມັດຈາກລັດຖະບານ ຊຶ່ງໄດ້ຜ່ານການສໍາຫຼວດລະອຽດ ໂດຍໃຫ້ສັງລວມເຂົ້າແຜນການຂຸດຄົ້ນໄມ້ປະຈໍາປີ.

9. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ສົມທົບກັບອົງການປົກຄອງເມືອງ, ບ້ານ ຄົ້ນຄວ້າ ແລະ ສົ່ງເສີມການລົງທຶນໃສ່ການຂຸດຄົ້ນໄມ້ ໂດຍນໍາໃຊ້ທ່າແຮງຂອງພາກລັດ ແລະ ຜູ້ປະກອບການ ເພື່ອສ້າງໃຫ້ມີການຈັດຕັ້ງ ຫຼື ກອງຂຸດຄົ້ນໄມ້ທີ່ເປັນໜ່ວຍງານເຄື່ອນໄຫວແບບວິຊາອາຊີບ ເປັນປົກກະຕິຕໍ່ເນື່ອງ, ປະສົມປະສານໄປກັບການປົກປັກຮັກສາ, ບູລະນະປ່າໄມ້ ໂດຍຢູ່ພາຍໃຕ້ການຄຸ້ມຄອງຂອງອໍານາດການປົກຄອງ ແລະ ຂະແໜງການທີ່ກ່ຽວຂ້ອງຂອງທ້ອງຖິ່ນ.

10. ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຮີບຮ້ອນເດັດສົມໂຮງງານປຸງແຕ່ງໄມ້ທຸກປະເພດ ໃຫ້ສໍາເລັດໂດຍໄວ, ພ້ອມດຽວກັນ ກໍ່ໃຫ້ຊີ້ນໍາສະມາຄົມອຸດສາຫະກໍາປຸງແຕ່ງໄມ້ຂອງແຂວງ ແລະ ສະມາຄົມເຟີນີເຈີ ປັບປຸງພາລະບົດບາດ ແລະ ກົນໄກການເຄື່ອນໄຫວວຽກງານຂອງຕົນ ໃຫ້ມີຄວາມເຂັ້ມແຂງ ເພື່ອປະຕິບັດນະໂຍບາຍສົ່ງເສີມການປຸງແຕ່ງໄມ້ຢູ່ພາຍໃນ ໃຫ້ສາມາດສ້າງມູນຄ່າເພີ້ມ ແລະ ມີຄຸນນະພາບ ຕາມຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ.

11. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ເປັນເຈົ້າການ ສົມທົບກັບ ກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງກວດກາລາດຕະເວນຕາມເຂດທີ່ຫຼໍ່ແຫຼມ, ມີການລັກຂຸດຄົ້ນໄມ້, ສະຖານທີ່ຂຸດຄົ້ນໄມ້, ເສັ້ນທາງຂົນສົ່ງໄມ້, ສະໜາມໄມ້, ໂຮງເລື່ອຍ, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ, ສາງເກັບມ້ຽນໄມ້, ໂຮງງານທີ່ນໍາໃຊ້ໄມ້ເປັນພະລັງງານ ແລະ ສະຖານທີ່ກ່ຽວຂ້ອງອື່ນໆ ຕາມການລາຍງານມາແລ້ວ. ຖ້າມີການລະເມີດ ຫຼື ການກະທໍາຜິດ ແມ່ນໃຫ້ດໍາເນີນການສືບສວນ - ສອບສວນເພື່ອມີມາດຕະການທາງແພ່ງ ແລະ ທາງອາຍາ; ໃນກໍລະນີຮ້າຍແຮງ ແມ່ນໃຫ້ປະກອບສໍານວນຄະດີສົ່ງໃຫ້ໄອຍະການເພື່ອສັ່ງຟ້ອງຂຶ້ນສານ. ພ້ອມດຽວກັນ ກໍໃຫ້ດໍາເນີນການກວດກາການນໍາເຂົ້າ, ການຊື້ - ຂາຍ, ການມີໄວ້ໃນການຄຸ້ມຄອງ ແລະ ການນໍາໃຊ້ເຄື່ອງມືອຸປະກອນ, ເຄື່ອງຈັກ, ພາຫານະ ແລະ ສິ່ງອໍານວຍຄວາມສະດວກໃນການຂຸດຄົ້ນໄມ້ທີ່ບໍ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ, ຖ້າມີການຊຸກເຊື່ອງເພື່ອລັກລອບນໍາໃຊ້ແມ່ນໃຫ້ຢຶດໄວ້ແລ້ວດໍາເນີນຄະດີຕໍ່ຜູ້ກະທໍາຜິດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

12. ໃຫ້ພະແນກກະສິກຳ ແລະ ປ່າໄມ້, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກອຸດສາຫະກຳ ແລະ ການຄ້າ ແລະ ພະແນກການເງິນ ເອົາໃຈໃສ່ປັບປຸງໜ່ວຍງານ ແລະ ບຸກຄະລາກອນຂອງຕົນ ທີ່ຮັບຜິດຊອບຕໍ່ວຽກງານປ່າໄມ້ ແລະ ທຸລະກິດໄມ້ທັງຢູ່ແຂວງ, ເມືອງ ແລະ ບ້ານ ໂດຍໃຫ້ປະຕິບັດລະບຽບການປະສານສົມທົບຢ່າງກົມກຽວ, ປະຕິບັດໜ້າທີ່ຂອງໃຜລາວຢ່າງຈິງຈັງ, ເຂັ້ມງວດ ແລະ ມີຄວາມໂປ່ງໃສ; ເດັດດ່ຽວປົກປ້ອງ, ສົ່ງເສີມຜູ້ດີ ມີຄວາມສັດຊື່ ແລະ ມີຄວາມສາມາດ. ພ້ອມນັ້ນກໍເຂັ້ມງວດຕໍ່ບຸກຄົນບໍ່ດີ ທີ່ມີການສົມຮູ້ຮ່ວມຄິດສວຍໂອກາດຫາຜົນປະໂຫຍດໃຫ້ແກ່ຕົນ ແລະ ຝ່າຝືນລະບຽບກົດໝາຍ ຢ່າງເຂັ້ມງວດ.

13. ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການສົມທົບກັບ ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກກະສິກຳ ແລະ ປ່າໄມ້ ແລະ ອຳນາດການປົກຄອງທ້ອງຖິ່ນ ເພີ່ມທະວີການເຝົ້າລະວັງ ແລະ ປ້ອງກັນເວນຍາມ ບໍ່ໃຫ້ມີການລັກລອບຂຸດຄົ້ນໄມ້ໃນເຂດປ່າປ້ອງກັນ ແລະ ປ່າສະຫງວນແຫ່ງຊາດ ແລະ ຂອງທ້ອງຖິ່ນ. ກໍລະນີພົບເຫັນປະກົດການລັກລອບຕັດໄມ້ໃນເຂດດັ່ງກ່າວຕ້ອງໃຊ້ມາດຕະການເດັດຂາດ ແລະ ເຂັ້ມງວດຕໍ່ຜູ້ກະທຳຜິດ.

14. ຫ້າມບັນດາບັນດາດ່ານຕ່າງໆ ຢູ່ຊາຍແດນອະນຸຍາດ ຫຼື ອຳນວຍຄວາມສະດວກໃນການສົ່ງອອກໄມ້ ແລະ ເຄື່ອງປ່າຂອງດົງທີ່ໄດ້ລະບຸໄວ້ໃນຂໍ້ 2 ແລະ ຂໍ້ 3 ຂອງຄຳສັ່ງສະບັບນີ້ຢ່າງເດັດຂາດ.

15. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ, ຂະແໜງ ການທີ່ກ່ຽວຂ້ອງຕ່າງໆ ແລະ ຂັ້ນເມືອງ ຮັບຜິດຊອບຕິດຕາມກວດກາການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຕໍ່ທ່ານເຈົ້າແຂວງ ເປັນແຕ່ລະໄລຍະເພື່ອແກ້ໄຂບັນຫາຕ່າງໆ ທີ່ອາດເກີດຂຶ້ນໃຫ້ທັນກັບສະພາບການ.

16. ໃຫ້ບັນດາພະແນກການ, ອົງການຈັດຕັ້ງຂັ້ນຕ່າງໆ ທົ່ວແຂວງຄົ້ນຄ້ວາກຳແໜ້ນຄຳສັ່ງສະບັບນີ້, ພ້ອມທັງຜັນຂະຫຍາຍອອກເປັນໜ້າວຽກລະອຽດຕາມຄວາມຮັບຜິດຊອບຂອງຕົນໂດຍໄວ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ. ກໍລະນີຂະແໜງການໃດ, ເມືອງໃດ ແລະ ບ້ານໃດ ຫາກລະເມີດຕໍ່ຄຳສັ່ງສະບັບນີ້ ແມ່ນຄະນະນຳຂອງຂະແໜງການນັ້ນ ຫຼື ທ້ອງຖິ່ນນັ້ນຕ້ອງເປັນຜູ້ຮັບຜິດຊອບຕໍ່ລະບຽບກົດໝາຍ.

17. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ນິຕິກຳຕ່າງໆ ທີ່ໄດ້ອອກຜ່ານມານັ້ນເຊິ່ງມີເນື້ອໃນຂັດກັບຄຳສັ່ງສະບັບນີ້ລ້ວນແຕ່ຖືກລົບລ້າງ.

**ເຈົ້າແຂວງ-ແຂວງອຸດົມໄຊ**

ແຂວງອຸດົມໄຊ ເຈົ້າແຂວງ

ເພັດສາຄອນ ຫຼວງອາໄພ

<u>ສຳເນົາສົ່ງ:</u>

- ເຈົ້າເມືອງ 7 ເມືອງ ເມືອງລະ 1 ສະບັບ
- ບັນດາພະແນກການຂັ້ນແຂວງພະແນກລະ 1 ສະບັບ
- ອົງການທຽບເທົ່າຂັ້ນແຂວງ ອົງການລະ 1 ສະບັບ
- ສອງກອງບັນຊາການ ປກຊ-ປກສ ກອງບັນຊາການລະ 1 ສະບັບ
- ບັນດາຫ້ອງການສັງກັດຫ້ອງວ່າການປົກຄອງແຂວງຫ້ອງການລະ 1 ສະບັບ
- ຫ້ອງການຂັ້ນເມືອງຫ້ອງການລະ 1 ສະບັບ (ໃຫ້ຫ້ອງວ່າການປົກຄອງເມືອງແຕ່ລະເມືອງກອບປີແລ້ວສົ່ງໃຫ້)
- ສຳເນົາ 3 ສະບັບ